ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 10 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 14-07-2023

# ຄຳສັ່ງ
## ວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ

ເຖິງ : - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ.
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາ ທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.
- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທີ່ມີພູມລຳເນົາຢູ່ ສປປ ລາວ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ມະຕິກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ພຶດສະພາ 2023 ສະບັບເລກທີ 07/ລບ, ລົງວັນທີ 26 ພຶດສະພາ 2023;
- ອີງຕາມ ໜັງສືສະເໜີຂອງທະນາຄານແຫ່ງ ສປປ ລາວ ສະບັບເລກທີ 40/ທຫລ, ລົງວັນທີ 09 ພຶດສະພາ 2023.

ເພື່ອເຮັດໃຫ້ເນື້ອໃນຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ ໂດຍສະເພາະການຄຸ້ມຄອງ ແລະ ການນຳໃຊ້ ເງິນຕາຕ່າງປະເທດ, ການຕິດຕາມກະແສເງິນ ຕິດພັນກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ/ຫຼື ການບໍລິການ, ລາຍຮັບຂອງຜູ້ອອກແຮງງານ, ການລົງທຶນໂດຍກົງຂອງຕ່າງປະເທດ ຢູ່ ສປປ ລາວ, ການລາຍງານກ່ຽວກັບເງິນຝາກຢູ່ຕ່າງປະເທດ ແລະ ການບໍລິການແລກປ່ຽນເງິນຕາ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ການຄຸ້ມຄອງເງິນຕາຕ່າງປະເທດ ຢູ່ ສປປ ລາວ

ມອບໃຫ້ທະນາຄານແຫ່ງ ສປປ ລາວ ອອກນິຕິກຳກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ ໃນຮູບແບບເງິນຝາກ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີພູມລຳເນົາຢູ່ ສປປ ລາວ ໃຫ້ນຳເງິນຕາຕ່າງປະເທດ ຝາກໄວ້ນຳທະນາຄານທຸລະກິດທີ່ຕັ້ງຢູ່ ສປປ ລາວ ເພື່ອຮັບປະກັນຄວາມປອດໄພ ແລະ ສອດຄ່ອງກັບກົດໝາຍ.



สแกนด้วย CamScanner

ບຸກຄົນ, ນິຕິບຸກຄົນ ສາມາດຖືຄອງເງິນຕາຕ່າງປະເທດ ໃນຮູບແບບເງິນສົດ ຕາມຈຳນວນທີ່ທະນາຄານແຫ່ງ ສປປ ລາວ ກຳນົດໃນແຕ່ລະໄລຍະ. ກໍລະນີ ບຸກຄົນ, ນິຕິບຸກຄົນ ທີ່ຖືຄອງເງິນຕາຕ່າງປະເທດ ໃນຮູບແບບເງິນສົດ ເກີນ ຈຳນວນທີ່ກຳນົດ ແລະ ບໍ່ສາມາດຢັ້ງຢືນແຫຼ່ງທີ່ມາໄດ້ຢ່າງຊັດເຈນ ຖືວ່າເງິນດັ່ງກ່າວ ບໍ່ຖືກຕ້ອງຕາມກົດໝາຍ.

2. ການນຳໃຊ້ເງິນຕາຕ່າງປະເທດ ຢູ່ ສປປ ລາວ

2.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

1) ປັບປຸງລະບົບການຊຳລະພາຍໃນປະເທດໃນຮູບແບບເອເລັກໂຕຣນິກ ທີ່ເປັນເງິນຕາຕ່າງປະເທດ ໃຫ້ມີຂອບເຂດຈະແຈ້ງ, ມີກົນໄກການຢັ້ງຢືນທຸລະກຳ ຖືກຕ້ອງຕາມຈຸດປະສົງຂອງການຊຳລະທີ່ແທ້ຈິງ ເພື່ອເຮັດໃຫ້ການນຳໃຊ້ເງິນຕາຕ່າງປະເທດ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2) ພັດທະນາລະບົບການຊຳລະ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຄ້າຜ່ານຊ່ອງທາງເອເລັກໂຕຣນິກ ໂດຍກຳນົດໃຫ້ຊຳລະ ຄ່າສິນຄ້າ ແລະ ຄ່າບໍລິການ ເປັນເງິນກີບ ຢູ່ ສປປ ລາວ;
3) ອອກລະບຽບການ ໃນການນຳໃຊ້ເງິນຕາຕ່າງປະເທດ ຢູ່ເຂດເສດຖະກິດພິເສດ ລວມທັງເຂດກິດຈະການກາຊີໂນ ແລະ ເປົ້າໝາຍອື່ນ ໃຫ້ສອດຄ່ອງກັບຈຸດພິເສດຂອງກິດຈະການດັ່ງກ່າວ;

2.2 ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:

1) ເກັບລາຍຮັບ ແລະ ພັນທະງົບປະມານອື່ນ ເປັນເງິນກີບ. ການເກັບລາຍຮັບງົບປະມານເປັນເງິນຕາຕ່າງປະເທດ ສາມາດປະຕິບັດໄດ້ສະເພາະວິສາຫະກິດ ທີ່ມີການສົ່ງອອກສິນຄ້າ ຫຼື ການບໍລິການ ທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ດ້ວຍຄວາມສະໝັກໃຈ.
2) ລາຍຮັບງົບປະມານແຫ່ງລັດ ທີ່ເປັນເງິນຕາຕ່າງປະເທດ ແລະ ເຄື່ອນໄຫວຜ່ານກະຊວງການເງິນ ໃຫ້ຝາກໄວ້ລວມສູນນຳທະນາຄານແຫ່ງ ສປປ ລາວ, ເມື່ອຕ້ອງການນຳໃຊ້ຢູ່ພາຍໃນປະເທດ ຕ້ອງຂາຍເງິນຕາຕ່າງປະເທດໃຫ້ທະນາຄານແຫ່ງ ສປປ ລາວ ຕາມອັດຕາແລກປ່ຽນຂອງທະນາຄານແຫ່ງ ສປປ ລາວ ທີ່ປະກາດໃນແຕ່ລະວັນ;

2.3 ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການກຳນົດໂຄງປະກອບລາຄາ, ການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ລວມທັງການຊື້ ຂາຍ ຜ່ານຊ່ອງທາງການຄ້າເອເລັກໂຕຣນິກ ເປັນຕົ້ນ ການຊື້ ຂາຍ ຍານພາຫະ ນະ ແລະ ວັດຖຸມີຄ່າ, ຄ່າບໍລິການໃຫ້ຄຳປຶກສາ ຢູ່ ສປປ ລາວ ເປັນເງິນກີບ;

2.4 ມອບໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ການຊື້ ຂາຍ ສິດນຳໃຊ້ທີ່ດິນ, ສິ່ງປຸກສ້າງ ຢູ່ ສປປ ລາວ ເປັນເງິນກີບ;

2.5 ມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການ ຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ຄ່າຮັບເໝົາກໍ່ສ້າງ, ຄ່າບໍລິການຂົນສົ່ງ ແລະ ໂດຍສານ ທາງບົກ, ທາງນ້ຳ, ທາງອາກາດ ແລະ ທ່າບົກ ຢູ່ ສປປ ລາວ ເປັນເງິນກີບ;

2.6 ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ຄ່າບໍລິການ ການສຶກສາ ແລະ ວິທະຍາສາດ, ຄ່າກິລາ-ກາຍຍະກຳ ຢູ່ ສປປ ລາວ ເປັນເງິນກີບ;



สแกนด้วย CamScanner

2.7 ມອບໃຫ້ກະຊວງສາທາລະນະສຸກ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ຄ່າປິ່ນປົວ, ຄ່າຢາ, ຄ່າຜະລິດຕະພັນການແພດ ຢູ່ ສປປ ລາວ ໃຫ້ເປັນເງິນກີບ;

2.8 ມອບໃຫ້ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກສ່ວນ ໃນການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ຄ່າບໍລິການວຽກງານສື່ມວນຊົນ, ຄ່າບໍລິການທຸລະກິດນຳທ່ຽວ, ຄ່າບໍລິການສະຖານທີ່ພັກແຮມ, ຄ່າອາຫານ ແລະ ເຄື່ອງດື່ມ ຕາມສະຖານທີ່ບໍລິການ ຢູ່ ສປປ ລາວ ໃຫ້ເປັນເງິນກີບ;

2.9 ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ຄຸ້ມຄອງ ແລະ ຕິດຕາມ ກວດກາ ທຸກພາກ ສ່ວນ ໃນການຕິດ, ການປະກາດ ຫຼື ການໂຄສະນາ, ການຊຳລະ ແລະ ຮັບຊຳລະ ເປັນຕົ້ນ ເງິນເດືອນ ຫຼື ຄ່າແຮງງານ ຢູ່ ສປປ ລາວ ເປັນເງິນກີບ. ສຳລັບຫົວໜ່ວຍແຮງງານ ຫຼື ການຈັດຕັ້ງ ທີ່ມີຄວາມຈຳເປັນວ່າຈ້າງແຮງງານ ຫຼື ຊ່ຽວຊານມາຈາກຕ່າງປະເທດ ສາມາດກຳນົດ ແລະ ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານໃນ ສປປ ລາວ ເປັນເງິນຕາຕ່າງປະເທດ.

2.10 ໃຫ້ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີພູມລຳເນົາ ຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ກຳນົດໂຄງປະກອບລາຄາ, ການຕິດ, ການປະກາດ ຫຼື ການໂຄສະນາ ລາຄາ ສິນຄ້າ ແລະ ຄ່າບໍລິການ ລວມທັງການຊຳລະ ແລະ ຮັບຊຳລະ ທຸກຮູບແບບ ຢູ່ ສປປ ລາວ ເປັນເງິນກີບເທົ່ານັ້ນ ເປັນຕົ້ນ ການຊື້ ຂາຍ ສິດນຳໃຊ້ທີ່ດິນ, ຍານພາຫະນະ ແລະ ວັດຖຸມີຄ່າ, ຄ່າຮັບເໝົາກໍ່ສ້າງ, ຄ່າບໍລິການຂົນສົ່ງ ແລະ ໂດຍສານ, ຄ່າບໍລິການທ່າບົກ, ຄ່າບໍລິການ ການສຶກສາ ແລະ ວິທະຍາສາດ, ຄ່າກິລາ-ກາຍະກຳ, ຄ່າປິ່ນປົວ, ຄ່າຢາ, ຄ່າຜະລິດຕະພັນການແພດ, ຄ່າສື່ມວນຊົນ, ຄ່າບໍລິການທຸລະກິດນຳທ່ຽວ, ຄ່າບໍລິການສະຖານທີ່ພັກແຮມ, ຄ່າອາຫານ ແລະ ເຄື່ອງດື່ມ, ເງິນເດືອນ ຫຼື ຄ່າແຮງງານ, ຄ່າສິນຄ້າອຸປະໂພກ-ບໍລິໂພກ, ຄ່າບໍລິການໃຫ້ຄຳປຶກສາ ແລະ ຄ່າອື່ນ.

3. ການຕິດຕາມກະແສເງິນ ຕິດພັນກັບການນຳເຂົ້າ-ສົ່ງອອກ ສິນຄ້າ ແລະ/ຫຼື ການບໍລິການ

3.1 ມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດ ດັ່ງນີ້:

1) ສ້າງ ແລະ ພັດທະນາ ລະບົບຄຸ້ມຄອງຜູ້ນຳເຂົ້າ-ສົ່ງອອກ ໃຫ້ລວມສູນ ທີ່ມີຖານຂໍ້ມູນຄົບຖ້ວນ ແລະ ຖືກຕ້ອງ ພ້ອມທັງສາມາດເຊື່ອມໃຊ້ຮ່ວມກັນໄດ້ກັບທະນາຄານແຫ່ງ ສປປ ລາວ ແລະ ຂະ ແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມການນຳເຂົ້າ-ສົ່ງອອກ ໃຫ້ມີຄວາມຮັດກຸມ;

2) ກຳນົດເງື່ອນໄຂ, ຂັ້ນຕອນ ແລະ ໃຫ້ບໍລິການ ໃນການລົງທະບຽນຜູ້ນຳເຂົ້າ-ສົ່ງອອກ;

3) ດັດສົມຈຳນວນວິສາຫະກິດນຳເຂົ້າສິນຄ້າ ໃຫ້ເໝາະສົມກັບຄວາມອາດສາມາດດຸ່ນດ່ຽງເງິນຕາຕ່າງປະເທດ;

4) ກຳນົດລາຍການສິນຄ້າທີ່ສຳຄັນ ແລະ ຈຳເປັນ ໃນການດຳລົງຊີວິດປະຈຳວັນ ສຳລັບການນຳເຂົ້າ ສປປ ລາວ ເພື່ອໃຫ້ທະນາຄານແຫ່ງ ສປປ ລາວ ຊຸກຍູ້ທະນາຄານທຸລະກິດ ໃນການດັດສົມເງິນຕາຕ່າງປະເທດໃຫ້ແທດເໝາະ ແລະ ມີລັກສະນະປະຢັດ;

3.2 ມອບໃຫ້ກະຊວງການເງິນ ປະຕິບັດ ດັ່ງນີ້:



สแกนด้วย CamScanner

1) ຄົ້ນຄວ້າມາດຕະການທາງດ້ານພາສີ-ອາກອນ ເພື່ອຊຸກຍູ້, ສົ່ງເສີມ ການຜະລິດເພື່ອຊົມໃຊ້ພາຍໃນ ແລະ ການຜະລິດເພື່ອການສົ່ງອອກ ແລະ ຫຼຸດຜ່ອນການນໍາເຂົ້າສິນຄ້າຟູມເຟືອຍ ແລະ ບໍ່ຈໍາເປັນ ເພື່ອຈໍາກັດຄວາມຕ້ອງການເງິນຕາຕ່າງປະເທດ;

2) ພັດທະນາລະບົບຂໍ້ມູນທາງດ້ານພາສີອາກອນ ທີ່ສາມາດເຊື່ອມໃຊ້ຮ່ວມກັບໄດ້ກັບທະນາຄານແຫ່ງ ສປປ ລາວ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຕິດຕາມການນໍາເຂົ້າ-ສົ່ງອອກ;

3) ກົມພາສີ ເຂັ້ມງວດປະຕິບັດມາດຕະການໃຈະການສົ່ງອອກສິນຄ້າຕາມການຢັ້ງຢືນຂອງທະນາຄານແຫ່ງ ສປປ ລາວ ໃນການນໍາລາຍຮັບຈາກການສົ່ງອອກເຂົ້າມາ ສປປ ລາວ;

3.3 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

1) ປະສານສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ອອກນິຕິກໍາຄຸ້ມຄອງກະແສເງິນຕາຕ່າງປະເທດ ຕິດພັນກັບການນໍາເຂົ້າ-ສົ່ງອອກ ຕາມຄຸນລັກສະນະຂອງແຕ່ລະປະເພດທຸລະກິດ ພ້ອມທັງຕິດຕາມ ກວດກາການຈັດຕັ້ງປະຕິບັດນິຕິກໍາດັ່ງກ່າວ;

2) ຄົ້ນຄວ້າ ແລະ ທົບທວນ ຫຼັກການໃນການສະໜອງສິນເຊື່ອ ເພື່ອຊຸກຍູ້, ສົ່ງເສີມ ການຜະລິດເພື່ອຊົມໃຊ້ພາຍໃນ ແລະ ການຜະລິດເພື່ອການສົ່ງອອກ ແລະ ດັດສົມເງິນຕາຕ່າງປະເທດ ໃຫ້ແກ່ການນໍາເຂົ້າສິນຄ້າທີ່ສໍາຄັນ ແລະ ຈໍາເປັນ ຕໍ່ການດໍາລົງຊີວິດປະຈໍາວັນ ແລະ ຈໍາກັດການສະໜອງເງິນຕາຕ່າງປະເທດໃຫ້ແກ່ການນໍາເຂົ້າສິນຄ້າຟູມເຟືອຍ;

3.4 ມອບໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ອອກນິຕິກໍາກ່ຽວກັບການໃຈະການອະນຸຍາດນໍາເຂົ້າ-ສົ່ງອອກ ສໍາລັບວິສາຫະກິດທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ທີ່ໄດ້ໂອນເງິນເຂົ້າ-ອອກ ສປປ ລາວ ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດ;

3.5 ໃຫ້ຜູ້ນໍາເຂົ້າ-ສົ່ງອອກ ປະຕິບັດ ດັ່ງນີ້:

1) ລົງທະບຽນຜູ້ນໍາເຂົ້າ-ສົ່ງອອກ ນໍາຂະແໜງອຸດສາຫະກໍາ ແລະ ການຄ້າ ແລ້ວລາຍງານທະນາຄານແຫ່ງ ສປປ ລາວ ກ່ຽວກັບຂໍ້ມູນບັນຊີເງິນຝາກທີ່ເປີດໄວ້ນໍາທະນາຄານທຸລະກິດຕ່າງໆ ເພື່ອຂໍໜັງສືຢັ້ງຢືນໄປແຈ້ງຕໍ່ທະນາຄານທຸລະກິດ ໃຫ້ຫັນບັນຊີເງິນຝາກທີ່ນໍາໃຊ້ຢູ່ ຫຼື ເປີດບັນຊີເງິນຝາກໃໝ່ ກ່ຽວກັບການນໍາເຂົ້າ-ສົ່ງອອກ;

2) ຜູ້ນໍາເຂົ້າ ຕ້ອງປະກອບຂໍ້ມູນ ການຊໍາລະຄ່າສິນຄ້າ ແລະ ການບໍລິການ ກັບຕ່າງປະເທດ ຜ່ານລະບົບທະນາຄານ ເຂົ້າໃນການແຈ້ງພາສີເປັນລາຍລະອຽດໃນລະບົບ ASYCUDA ຕາມລະບຽບການ;

3) ຜູ້ສົ່ງອອກ ຕ້ອງໂອນລາຍຮັບທັງໝົດຈາກການສົ່ງອອກ ເຂົ້າມາ ສປປ ລາວ ຜ່ານບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກ. ໃນກໍລະນີຕ້ອງການຮັກສາລາຍຮັບຈາກການສົ່ງອອກ ໄວ້ຢູ່ຕ່າງປະເທດເພື່ອຊໍາລະເງິນກູ້ ຕ້ອງຂໍອະນຸຍາດນໍາທະນາຄານແຫ່ງ ສປປ ລາວ ຊຶ່ງຈະພິຈາລະນາບົນພື້ນຖານທີ່ເປັນໂຄງການສໍາຄັນລະດັບຊາດ ທີ່ມີເອກະສານຢັ້ງຢືນກ່ຽວກັບການປະຕິບັດພັນທະຊໍາລະເງິນກູ້ກັບຕ່າງປະເທດ ໃນໄລຍະການຊໍາລະເງິນກູ້ເທົ່ານັ້ນ, ແຕ່ເງິນສ່ວນທີ່ເຫຼືອຈາກການຊໍາລະເງິນກູ້ຕ້ອງໂອນເຂົ້າບັນຊີເງິນຝາກກ່ຽວກັບການນໍາເຂົ້າ-ສົ່ງອອກຂອງຕົນ ທີ່ເປີດໄວ້ນໍາທະນາຄານທຸລະກິດຢູ່ ສປປ ລາວ.

4. ການຕິດຕາມກະແສເງິນ ຕິດພັນກັບລາຍຮັບຂອງຜູ້ອອກແຮງງານ

ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປັບປຸງກົນໄກການຄຸ້ມຄອງແຮງງານ ເພື່ອຕິດຕາມແຮງງານລາວທີ່ໄປເຮັດວຽກຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດຢູ່ ສປປ ລາວ ລວມທັງແຮງງານທີ່ບໍ່ເປັນທາງການ ພ້ອມທັງປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າພັດທະນາລະບົບການຊໍາລະຄ່າແຮງງານລະຫວ່າງປະເທດ ເພື່ອຮອງຮັບໃຫ້ແກ່ການໂອນລາຍຮັບກັບຄືນປະເທດ ໂດຍຜ່ານຜູ້ໃຫ້ບໍລິການຊໍາລະ.



สแกนด้วย CamScanner

5. ການຕິດຕາມກະແສເງິນ ຕິດພັນກັບການລົງທຶນໂດຍກົງຂອງຕ່າງປະເທດ ຢູ່ ສປປ ລາວ

5.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ອອກນິຕິກຳຄຸ້ມຄອງກະແສເງິນຕາຕ່າງປະເທດ ຕິດພັນກັບການລົງ ທຶນໂດຍກົງຂອງຕ່າງປະເທດ ຢູ່ ສປປ ລາວ;

5.2 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ປະຕິບັດ ດັ່ງນີ້:

1) ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ທົບທວນໂຄງສ້າງເງິນລົງທຶນທັງໝົດ ຂອງຜູ້ລົງທຶນຕ່າງປະເທດ ເພື່ອກຳນົດທິດທາງໃນການດຶງດູດຜູ້ລົງທຶນຕ່າງປະເທດ ໃຫ້ມີລັກສະນະຍືນຍົງ ບໍ່ສ້າງພາລະໜີ້ສິນຕ່າງປະເທດໃຫ້ແກ່ ສປປ ລາວ ໜັກໜ່ວງ;

2) ປະສານສົມທົບກັບທະນາຄານແຫ່ງ ສປປ ລາວ ໃນການຄົ້ນຄວ້າເນື້ອໃນຂອງສັນຍາສຳປະທານ ທີ່ຈະຕົກລົງກັບຜູ້ລົງທຶນຕ່າງປະເທດ ຕິດພັນກັບການຄຸ້ມຄອງເງິນຕາຕ່າງປະເທດ ເປັນຕົ້ນ ພັນທະທາງການເງິນ, ການນຳທຶນເຂົ້າ-ອອກ ສປປ ລາວ;

3) ພັດທະນາລະບົບຂໍ້ມູນຄຸ້ມຄອງການລົງທຶນໂດຍກົງຈາກຕ່າງປະເທດ ທີ່ສາມາດເຊື່ອມໃຊ້ຮ່ວມກັນໄດ້ກັບທະນາຄານແຫ່ງ ສປປ ລາວ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງການລົງທຶນໂດຍກົງຂອງຕ່າງປະເທດ ຢ່າງເປັນລະບົບ;

5.3 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜອງຂໍ້ມູນກ່ຽວກັບຜູ້ລົງທຶນຕ່າງປະເທດ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນປົກກະຕິ;

5.4 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງອື່ນທີ່ກ່ຽວຂ້ອງ ຄຸ້ມຄອງ ແລະ ຕິດຕາມ ກວດກາ ຜູ້ລົງທຶນຈາກຕ່າງປະເທດ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ ໃນການນຳທຶນຈາກຕ່າງປະເທດເຂົ້າມາ ສປປ ລາວ ໃຫ້ຄົບຖ້ວນ ພ້ອມທັງລາຍງານທະນາຄານແຫ່ງ ສປປ ລາວ ໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

5.5 ໃຫ້ຜູ້ລົງທຶນຕ່າງປະເທດ ປະຕິບັດ ດັ່ງນີ້:

1) ແຈ້ງທະນາຄານທຸລະກິດ ເພື່ອເປີດບັນຊີເງິນຝາກກ່ຽວກັບການລົງທຶນ ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ ຫຼື ໃບທະບຽນວິສາຫະກິດ;

2) ນຳທຶນທັງໝົດ ລວມທັງທຶນຈົດທະບຽນ ເຂົ້າມາ ສປປ ລາວ ໃຫ້ຄົບຖ້ວນຕາມກຳນົດເວລາ ທີ່ໄດ້ລະບຸໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ພ້ອມທັງສະເໜີຂໍການຢັ້ງຢືນການນຳເຂົ້າທຶນນຳທະນາຄານແຫ່ງ ສປປ ລາວ ແລະ ນຳໃບຢັ້ງຢືນການນຳເຂົ້າທຶນດັ່ງກ່າວ ແຈ້ງຕໍ່ຂະແໜງການທີ່ອອກໃບອະນຸຍາດລົງທຶນ ຫຼື ຄຸ້ມຄອງການດຳເນີນທຸລະກິດຂອງຕົນ. ການນຳໃຊ້ທຶນດັ່ງກ່າວ ເຂົ້າໃນການຊຳລະ ແລະ ຮັບຊຳລະ ຄ່າສິນຄ້າ, ການບໍລິການ ແລະ ຄ່າອື່ນ ຢູ່ ສປປ ລາວ ຕ້ອງປະຕິບັດເປັນເງິນກີບ.

6. ການລາຍງານກ່ຽວກັບເງິນຝາກຢູ່ຕ່າງປະເທດ

6.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປັບປຸງກົນໄກ ແລະ ລະບົບການຮັບແຈ້ງລາຍງານບັນຊີເງິນຝາກຢູ່ຕ່າງປະເທດ ຂອງຜູ້ມີພູມລຳເນົາ ຢູ່ ສປປ ລາວ ໃຫ້ສະດວກ ແລະ ທັນສະໄໝ ພ້ອມທັງກຳນົດໄລຍະເວລາການລາຍງານ ແລະ ມາດຕະການຕໍ່ຜູ້ທີ່ບໍ່ລາຍງານ;

6.2 ໃຫ້ບຸກຄົນ ແລະ ນິຕິບຸກຄົນ ທີ່ໄດ້ເປີດບັນຊີເງິນຝາກຂອງຕົນຢູ່ຕ່າງປະເທດ ກ່ອນກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ແຕ່ຍັງບໍ່ທັນໄດ້ລາຍງານ



สแกนด้วย CamScanner

ການເປີດບັນຊີດັ່ງກ່າວ ໃຫ້ລາຍງານຂໍ້ມູນກ່ຽວກັບບັນຊີເງິນຝາກຂອງຕົນ ແກ່ທະນາຄານແຫ່ງ ສປປ ລາວ ພາຍໃນວັນທີ 31 ທັນວາ 2024.

7. ການບໍລິການແລກປ່ຽນເງິນຕາ

7.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

1) ກຳນົດນະໂຍບາຍ ແລະ ລະບຽບການ ໃນການຄຸ້ມຄອງການບໍລິການແລກປ່ຽນເງິນຕາຂອງທະນາ ຄານທຸລະກິດ, ຊຸກຍູ້ສົ່ງເສີມການຂະຫຍາຍຕາໜ່າງການບໍລິການແລກປ່ຽນເງິນຕາ ໃນຮູບແບບຜ່ານປ່ອງບໍລິການ ແລະ/ຫຼື ທາງເອເລັກໂຕຣນິກ;

2) ປັບປຸງຕະຫຼາດຊື້ ຂາຍ ເງິນຕາຕ່າງປະເທດ ລະຫວ່າງທະນາຄານທຸລະກິດດ້ວຍກັນ ໃຫ້ມີຄວາມຄ່ອງຕົວ ແລະ ສ້າງເງື່ອນໄຂໃຫ້ທະນາຄານທຸລະກິດ ຊື້ ຂາຍ ເງິນຕາຕ່າງປະເທດດ້ວຍກັນ;

7.2 ໃຫ້ຫົວໜ່ວຍວິສາຫະກິດທີ່ມີແຫຼ່ງລາຍຮັບເປັນເງິນຕາຕ່າງປະເທດ ແລະ ທຸກພາກສ່ວນໃນສັງຄົມ ປະຕິບັດ ດັ່ງນີ້:

1) ແລກປ່ຽນເງິນຕາ ນຳທະນາຄານທຸລະກິດ ທີ່ຕັ້ງຢູ່ ສປປ ລາວ ເທົ່ານັ້ນ ຜ່ານປ່ອງບໍລິການຢູ່ສຳນັກ ງານໃຫຍ່, ສາຂາ, ໜ່ວຍບໍລິການ ຫຼື ທາງເອເລັກໂຕຣນິກ ທີ່ໄດ້ຮັບອະນຸຍາດ;

2) ບໍ່ແລກປ່ຽນເງິນຕານຳຜູ້ທີ່ບໍ່ໄດ້ຮັບອະນຸຍາດ ຖ້າລະເມີດຈະຖືກປະຕິບັດມາດຕະການທາງບໍລິຫານ ແລະ ດຳເນີນຄະດີຕາມກົດໝາຍ.

8. ການຈັດຕັ້ງປະຕິບັດ

8.1 ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້:

1) ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງການເງິນ, ກະຊວງແຜນການ ແລະ ການລົງທຶນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງປ້ອງກັນຄວາມສະ ຫງົບ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຕິດຕາມ, ປະເມີນຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ຕາມພາລະບົດບາດຂອງຕົນ ແລະ ສະຫຼຸບລາຍງານລັດຖະບານ ຢ່າງເປັນປະຈຳ;

2) ເປັນເຈົ້າການປະສານສົມທົບກັບຂະແໜງການການທີ່ກ່ຽວຂ້ອງ ເພື່ອແບ່ງຂັ້ນຄວາມຮັບຜິດຊອບໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ມາດຕະການຕໍ່ຜູ້ລະເມີດ ໂດຍສະເພາະມາດຕາ 55 ມາດຕະການປັບໃໝ ແລະ ມາດຕາ 56 ມາດຕະການທາງບໍລິຫານອື່ນ ຂອງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

8.2 ມອບໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນເຈົ້າການ ຕິດຕາມ ກວດກາ ການຄອບຄອງເງິນຕາຕ່າງປະເທດ ການແລກປ່ຽນນຳບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ລວມທັງການໃຫ້ບໍລິການແລກປ່ຽນເງິນຕາໂດຍບໍ່ໄດ້ຮັບອະນຸຍາດ, ການນຳເງິນສົດເຂົ້າ-ອອກ ສປປ ລາວ ພ້ອມທັງປະຕິບັດມາດຕະການຕໍ່ຜູ້ລະເມີດ ຕາມພາລະບົດບາດຂອງຕົນ ແລະ ແລກປ່ຽນຂໍ້ມູນກັບທະນາຄານແຫ່ງ ສປປ ລາວ ຢ່າງເປັນປະຈຳ;

8.3 ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ອອກນິຕິກຳແນະນຳໃນການຈັດຕັ້ງປະຕິບັດຕົວຈິງໃຫ້ລະອຽດຕື່ມ ພ້ອມທັງໂຄສະນາເຜີຍແຜ່ເຊື່ອມຊຶມ ແລະ ຊີ້ນຳໃຫ້ຂະແໜງການ, ທ້ອງຖິ່ນ, ນັກລົງທຶນ, ນັກທຸລະກິດ, ຜູ້ປະກອບການ ລວມທັງປະຊາຊົນບັນດາເຜົ່າ ໃຫ້ມີຄວາມເຂົ້າໃຈ



สแกนด้วย CamScanner

ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ, ແລ້ວສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ລັດຖະບານຊາບ ຢ່າງເປັນປົກກະຕິ;

8.4 ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ໃຫ້ໄດ້ຮັບຜົນດີ.

9. ຜົນສັກສິດ

ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ

สแกนด้วย CamScanner